ກະຊວງອຸດສາຫະກຳ ແລະ ການຄ້າ
ສະຖາບັນອຸດສາຫະກຳ ແລະ ການຄ້າ
ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ

# ການພັດທະນາການຄ້າເອເລັກໂຕຣນິກ (E-commerce) ຢູ່ ສປປ ລາວ

**ສິງຫາ, 2021**




## ບົດສະຫຼຸບຫຍໍ້

ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍນີ້ ແມ່ນມີຈຸດປະສົງ ເພື່ອທົບທວນນະໂຍບາຍ ແລະ ລະບຽບການໃນການຄຸ້ມຄອງ ແລະ ສົ່ງເສີມການຄ້າເອເລັກໂຕຣນິກໂດຍລວມຢູ່ ສປປ ລາວ ພ້ອມທັງຕີລາຄາການພັດທະນາ ແລະ ສິ່ງທ້າທາຍໃນການດຳເນີນທຸລະກິດດັ່ງກ່າວ ກັບບັນດາປະເທດໃນຂົງເຂດດຽວກັນ ດ້ວຍການສັງລວມຈາກເອກະສານທີ່ມີຢູ່ແລ້ວ ແລະ ຈາກການສຳພາດຂະແໜງການກ່ຽວຂ້ອງ ແລະ ຜູ້ປະກອບການຈຳນວນໜຶ່ງ. ສາມາດສະຫຼຸບໄດ້ວ່າ ການພັດທະນາການຄ້າເອເລັກໂຕຣນິກຂອງລາວ ແມ່ນຍັງຢູ່ໃນຊ່ວງຕົ້ນຂອງການພັດທະນາ, ໃນມູມມອງຂອງນັກຄົ້ນຄວ້າແລ້ວເຫັນວ່າຫົວໜ່ວຍທຸລະກິດຈະໄປໄວກວ່ານິຕິກຳຄຸ້ມຄອງ ແລະສົ່ງເສີມ ບາດກ້າວໜຶ່ງ. ເມື່ອທຽບກັບບັນດາປະເທດໃກ້ຄຽງແລ້ວ ພື້ນຖານໂຄງລາງໃນການສະໜັບສະໜູນການດຳເນີນການຄ້າເອເລັກໂຕຣນິກ ແມ່ນເຫັນວ່າ ສປປ ລາວ ຍັງຕາມຫຼັງຫຼາຍປະເທດ ໂດຍສະເພາະແມ່ນລະບົບ ICT, ໂລຊິດຕິກ (Logistics), ລະບົບການການຊຳລະ ແລະ ການຂົນສົ່ງ. ຮູບແບບຂອງການຄ້າຂາຍກໍ່ຍັງຈຳກັດ. ສິ່ງທີ່ຄວນເອົາໃຈໃສ່ຄື: 1). ເລັ່ງຈັດຕັ້ງຜັນຂະຫຍາຍດຳລັດວ່າດ້ວຍການຄ້າເອເລັກໂຕຣນິກໃຫ້ກ້ວາງຂວາງ ແລະ ທົ່ວເຖິງໃນສັງຄົມ; 2). ທຸລະກິດຄ້າຂາຍອອນລາຍຕ້ອງຫັນເຂົ້າສູ່ລະບົບຕາມລະບຽບການ ເພື່ອຮັບປະກັນການຄ້າທີ່ເປັນທຳ ແລະ ການປະກອບພັນທະໃຫ້ແກ່ພາກລັດໄດ້ຢ່າງມີປະສິດທິພາບ; 3). ສົ່ງເສີມ ແລະ ພັດທະນາພື້ນຖານໂຄງລ່າງທາງທຸລະກິດ ໃຫ້ແທດເໝາະກັບສະພາບການພັດທະນາຂອງທຸລະກິດ ພ້ອມທັງຮັບປະກັນການພັດທະນາຊັບພະຍາກອນມະນຸດໄປຄວບຄູ່ກັນ; 4). ການກຽມຄວາມພ້ອມຂອງໜ່ວຍງານປົກປ້ອງຜູ້ບໍລິໂພກ ແລະ ຕິດຕາມກວດກາການແຂ່ງຂັນທາງດ້ານການຄ້າທີ່ເປັນທຳ; ແລະ 5). ອຳນວຍຄວາມສະດວກທາງດ້ານການຄ້າຜ່ານແດນ ຈາກກິດຈະກຳທາງການຄ້າເອເລັກໂຕຣນິກລະຫວ່າງປະເທດ ທີ່ນັບມື້ນັບເພີ່ມຂຶ້ນພ້ອມທັງຮັບປະກັນຄວາມປອດໄພທີ່ມີລະບົບກວດສອບສິນຄ້າເຂົ້າ-ອອກທີ່ທັນສະໄໝ.

# ການພັດທະນາການຄ້າເອເລັກໂຕຣນິກ (E-commerce) ຢູ່ ສປປ ລາວ

## ບົດຄົ້ນຄວ້າຫຍໍ້ດ້ານນະໂຍບາຍ


ໂດຍ: ປອ ຈັນຜາສຸກ ວິດາວົງ ຮ່ວມກັບ ພະແນກຄົ້ນຄວ້ານະໂຍບາຍການຄ້າ

ສະຖາບັນອຸດສາຫະກໍາ ແລະ ການຄ້າ

Vidavong2108@gmail.com



ສິງຫາ 2021


## 1. ພາກສະເໜີ

ປັດຈຸບັນ ການຄ້າແບບໃໝ່ ຫຼື ຮູ້ກັນດີແມ່ນ ການຄ້າເອເລັກໂຕຣນິກ (Electronic Commerce) ໄດ້ມີບົດບາດຫຼາຍ ໃນລະບົບເສດຖະກິດດິຈິຕອນ (Digital Economy) ໃນການພັດທະນາເສດຖະກິດໂດຍລວມ ເຊິ່ງມີຜົນເຮັດໃຫ້ພຶດຕິກຳຂອງຜູ້ບໍລິໂພກປ່ຽນໄປຢ່າງໄວ ໃນການບໍລິໂພກສິນຄ້າສິນຄ້າ ແລະ ການຊົມໃຊ້ການບໍລິການໂດຍຜ່ານໂທລະສັບ, ອິນເຕີເນັດ ແລະ ເຄື່ອງມືອື່ນໆ ທາງເອເລັກໂຕຣນິກ. ການພັດທະນາ ລະບຽບການໃນການຄຸ້ມຄອງ ແລະ ສົ່ງເສີມການຄ້າເອເລັກໂຕຣນິກໂດຍລວມຢູ່ ສປປ ລາວ ແລະ ສິ່ງທ້າທາຍໃນການດໍາເນີນທຸລະກິດດັ່ງກ່າວຄວນໄດ້ຮັບການຕີລາຄາຄືນ.

ສປປ ລາວ ໄດ້ສຸມໃສ່ສ້າງ ແລະ ປັບປຸງນະໂຍບາຍ ແລະ ນິຕິກໍາທີ່ກ່ຽວຂ້ອງໃນການຄຸ້ມຄອງຂໍ້ມູນດິຈິຕອນ (Digital Data Governance, DDG) ແລະ ສົ່ງເສີມການຄ້າທາງເອເລັກໂຕຣນິກ (E-Commerce) ເພື່ອໃຫ້ສອດຄ່ອງກັບ ຄໍາໝັ້ນສັນຍາກ່ຽວກັບການຈັດຕັ້ງປະຕິບັດແຜນງານອາຊຽນການຄ້າເອເລັກໂຕຣນິກ 2017-2025, ແຜນການພັດທະນາການຄ້າເອເລັກໂຕຣນິກສໍາລັບປີ 2016-2020 ໂດຍສະເພາະແມ່ນການພັດທະນາພື້ນຖານໂຄງລ່າງ, ຄວາມສາມາດດ້ານການສຶກສາ ແລະ ເຕັກໂນໂລຊີ, ການປົກປ້ອງຜູ້ບໍລິໂພກ, ຄວາມປອດໄພໃນການເຮັດທຸລະກໍາທາງເອເລັກໂຕຣນິກ, ການແຂ່ງຂັນທີ່ເປັນທໍາ ແລະ ການພັດທະນາລະບົບ ICT ເພື່ອສະໜັບສະໜູນແຜນແມ່ບົດການຄ້າເອເລັກໂຕຣນິກຂອງອາຊຽນໃນປີ 2025 ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ່ IX ຂອງລັດຖະບານ 2021-2025.

ການຄ້າເອເລັກໂຕຣນິກແມ່ນການຊື້-ຂາຍ, ການແລກປ່ຽນສິນຄ້າ ຫຼື ການບໍລິການລະຫວ່າງຜູ້ຄ້າ ແລະ ລູກຄ້າ ໂດຍນໍາໃຊ້ຊ່ອງທາງເອເລັກໂຕຣນິກ ໄດ້ກາຍເປັນເຄື່ອງມືໜຶ່ງທີ່ສໍາຄັນ ໃຫ້ແກ່ວິສາຫະກິດຂະໜາດຈຸນລະ, ນ້ອຍ ແລະ ກາງ (MSME) ຂອງລາວໃນການຂະຫຍາຍຊ່ອງທາງ ທາງການຕະຫຼາດອອກສູ່ຕ່າງປະເທດ ແລະ ເປັນການຫຼຸດຜ່ອນຂໍ້ຈໍາກັດໃນການດໍາເນີນທຸລະກິດຂອງປະເທດເຊັ່ນ: ຂະໜາດຕະຫຼາດພາຍໃນນ້ອຍ (ດ້ານປະຊາກອນ ແລະ ລາຍຮັບ) ແລະ ພື້ນຖານໂຄງລ່າງທີ່ຍັງບໍ່ທັນໄດ້ຮັບການພັດທະນາດີເທົ່າທີ່ຄວນ (ຂໍ້ມູນສະໜັບສະໜູນໃນພາກຕໍ່ໄປ). ເຖິງຢ່າງໃດກໍ່ຕາມ, ເພື່ອໃຫ້ເກີດປະໂຫຍດສູງສຸດ ໃຫ້ກັບທຸລະກິດ MSME ພາຍໃນປະເທດຈາກການຄ້າໃນຍຸກໃໝ່ ຜົນກະທົບຈາກປັດໄຈພາຍໃນ ແລະປັດໄຈພາຍນອກຕໍ່ທຸລະກິດແມ່ນມີຄວາມສໍາຄັນ ແລະ ຈໍາເປັນເຊັ່ນ: 1) ປັດໄຈພາຍໃນ - ຄວາມສາມາດໃນການແຂ່ງຂັນຂອງທຸລະກິດເອງ (ການບໍລິຫານຈັດການ, ທັກສະຂອງແຮງງານ, ການໝູນໃຊ້ເຕັກໂນໂລຊີ ເຂົ້າໃນການດໍາເນີນທຸລະກິດ, ການສ້າງເຄືອຄ່າຍ ແລະ ການເຂົ້າຮ່ວມກຸ່ມທຸລະກິດຕ່າງໆ) ແລະ 2) ປັດໄຈພາຍນອກ (ຄວາມສອດຄ່ອງກັນຂອງການຈັດຕັ້ງປະຕິບັດນະໂຍບາຍ ຂອງແຕ່ລະຂະແໜງການປິ່ນອອ້ມ ແລະ ການປະສານງານກັນ, ມີລະບົບອິນເຕີເນັດທີ່ມີຄວາມສະຖຽນ ແລະ ລາຄາສົມເຫດສົມຜົນ, ການເຮັດທຸລະກໍາ ແບບດິຈິຕອນທີ່ປອດໄພ ແລະ ງ່າຍດາຍ, ລະບົບການຊໍາລະທາງເອເລັກໂຕຣນິກ E-payment, ການຄຸ້ມຄອງ ແລະ ສົ່ງເສີມ ການແຂ່ງຂັນທີ່ເປັນທໍາ ແລະ ການພັດທະນາລະບົບໂລຊິດຕິກ-Logistics) ສິ່ງຕ່າງໆເຫຼົ່ານີ້ຄວນຈະໄດ້ຮັບການພັດທະນາ ເພື່ອຮອງຮັບການຂະຫຍາຍຕົວ ຂອງການຄ້າເອເລັກໂຕຣນິກໃນປັດຈຸບັນ ແລະ ອະນາຄົດ.

ບົດບາດການນໍາພາ ແລະ ຄຸ້ມຄອງເສດຖະກິດຂອງລັດແມ່ນປັດໄຈຕັດສິນສໍາຄັນຂອງການເລີ່ມຕົ້ນ ແລະ ພັດທະນາຂອງທຸລະກິດໃນຍຸກສະໄໝໃໝ່ນີ້. ການຕີລາຄາຄືນເຖິງຄວາມພ້ອມຂອງພາກລັດ ແລະ ບັນດານິຕິກໍາຄຸ້ມຄອງ ແລະສົ່ງເສີມການຄ້າເອເລັກໂຕຣນິກໂດຍລວມຢູ່ ສປປ ລາວ ຈະສາມາດຊີ້ໃຫ້ເຫັນພາບລວມການພັດທະນາການຄ້າ ເອເລັກໂຕຣນິກຂອງປະເທດ ແລະ ສິ່ງທ້າທາຍທີ່ຕ້ອງປັບປຸງ ເພື່ອໃຫ້ລະດັບການພັດທະນາການຄ້າເອເລັກໂຕຣນິກກ້າວສູ່ສາກົນເທື່ອລະກ້າວ. **ດັ່ງນັ້ນ, ບົດນະໂຍບາຍຫຍໍ້ສະບັບນີ້ ແມ່ນຈະໄດ້ນໍາສະເໜີຜົນຄົ້ນຄວ້າໂດຍອີງຕາມຜົນຕີລາຄາຄືນ** ລະບຽບການໃນການຄຸ້ມຄອງ ແລະ ສົ່ງເສີມການຄ້າເອເລັກໂຕຣນິກໂດຍລວມຢູ່ ສປປ ລາວ ຈໍານວນໜຶ່ງ ພ້ອມທັງຕີລາຄາການພັດທະນາ ແລະ ສິ່ງທ້າທາຍໃນການດໍາເນີນທຸລະກິດກັບບັນດາປະເທດໃນຂົງເຂດດຽວກັນ**ດ້ວຍການສັງເກດ, ປຽບທຽບ ຂໍ້ມູນ ແລະ ເອກະສານທີ່ມີຢູ່ແລ້ວ ແລະ ຈາກການສໍາຫຼວດຂໍ້ມູນນໍາພາກສ່ວນກ່ຽວຂ້ອງເຊັ່ນ: ໜ່ວຍງານພາກລັດ 4 ຂະແໜງການ ແລະ ພາກທຸລະກິດ 10 ຫົວໜ່ວຍ ທີ່ກ່ຽວຂ້ອງກັບການຄ້າເອເລັກໂຕຣນິກ.**

## 2. ປັດໄຈສໍາຄັນຕໍ່ກັບການພັດທະນາການຄ້າເອເລັກໂຕຣນິກ

### 2.1. ພື້ນຖານໂຄງລ່າງທຸລະກິດເອເລັກໂຕຣນິກ (E-Business infrastructure)

ປັດໄຈຕ່າງໆ ທີ່ເປັນພື້ນຖານສໍາລັບການຄ້າຂາຍ ຜ່ານລະບົບເອເລັກໂຕຣນິກ ມັນມີຄວາມຈໍາເປັນຕ້ອງມີລະບົບ ICT ທີ່ຮອງຮັບໃຫ້ເທົ່າທຽມ ຫຼື ໃກ້ຄຽງກັບສາກົນ, ອິນເຕີເນັດຕ້ອງມີຄວາມໄວສູງ ແລະ ສະຖຽນ, ປະຊາກອນຕ້ອງເຂົ້າເຖິງ ແລະ ຮູ້ຈັກການນໍາໃຊ້ໂທລະສັບທີ່ສາມາດຮອງຮັບລະບົບດິຈິຕອນ(Digital) ໄດ້ຫຼາຍຂຶ້ນ ແຕ່ເມື່ອທຽບຕົວຊີ້ວັດເຫຼົ່ານັ້ນກັບບັນດາປະເທດອາຊຽນ ເຫັນວ່າ ສປປ ລາວ ຍັງຢູ່ໃນລະດັບການພັດທະນາທີ່ຕໍ່າກວ່າຫຼາຍປະເທດ ເຊິ່ງສະແດງອອກໃນຕາຕະລາງທີ 1. ນອກຈາກນັ້ນ, ຕາຕະລາງ 2 ມີຫຼາຍຕົວຊີ້ວັດທີ່ສະແດງເຫັນວ່າ ປະເທດເຮົາຍັງຈັດຢູໃນລະດັບການພັດທະນາຕໍ່າ ຍົກເວັ້ນປະເທດກໍາປູເຈຍ ແລະ ມຽນມາ ດັ່ງຕົວຊີ້ວັດຄື: ການຈັດລະດັບການ

**ຕາຕະລາງ 1: ລະດັບການພັດທະນາ ICT ໃນປະເທດອາຊຽນ**

| ປະເທດ | ລະດັບ ITU (2018) | ປະຊາກອນນຳໃຊ້ອິນເຕີເນັດ (%) | ການນຳໃຊ້ໂທລະສັບມືຖື (ຕໍ່ 100 ຄົນ) | ການນຳໃຊ້ 3G (%) | ການນຳໃຊ້ 4G (%) |
|---|---|---|---|---|---|
| ສິງກະໂປ | 18 | 84.4 | 156 | 100 | 100 |
| ບຣູໄນ | 53 | 94.9 | 129 | 92.7 | 90 |
| ມາເລເຊຍ | 63 | 80.1 | 140 | 96.2 | 92 |
| ໄທ | 78 | 49.6 | 186 | 98 | 98 |
| ຟີລິບປິນ | 101 | 60.1 | 155 | 93 | 80 |
| ຫວຽດນາມ | 108 | 69 | 141 | 95 | 95 |
| ອິນໂດເນເຊຍ | 111 | 32.3 | 127 | 93.8 | 90.4 |
| ກຳປູເຈຍ | 128 | 34 | 130 | 83.9 | 57.5 |
| ມຽນມາ | 135 | 30.7 | 114 | 90.5 | 75.1 |
| ລາວ | 139 | 25.5 | 61 | 78 | 9 |

ແຫຼ່ງຂໍ້ມູນ: WDI, 2021 ແລະ  ITU, 2021

ພັດທະນາດ້ານໂລຊິດຕິກ (Logistics), ລະບົບອາກອນ, ການຂົນສົ່ງລະຫວ່າງປະເທດ, ຄວາມສາມາດດ້ານການຂົນສົ່ງ, ລະບົບການຕິດຕາມການຂົນສົ່ງ ແລະ ພື້ນຖານໂຄງລ່າງອື່ນໆ. ມັນສະທ້ອນໃຫ້ເຫັນເຖິງຂໍ້ຈຳກັດທີ່ສຳຄັນຈຳນວນໜຶ່ງທີ່ມີຜົນກະທົບຕໍ່ການຂະຫຍາຍຕົວ ການຄ້າເອເລັກໂຕຣນິກເຊັ່ນ: ລະບົບໄປສະນີຍັງຂາດລະບົບທີ່ເກັບກຳຂໍ້ມູນທີ່ມີປະສິດທິພາບສຳລັບຄົວເຮືອນ ເຊິ່ງເຮັດໃຫ້ການຈັດສົ່ງສິນຄ້າໃຊ້ເວລາຫຼາຍ ເຊິ່ງສະແດງອອກໃນຕົວຊີ້ວັດດ້ານເວລາການຂົນສົ່ງມີຄະແນນຕໍ່າກວ່າໝູ່ໃນອາຊຽນ.

**ຕາຕະລາງ 2: ຕົວຊີ້ວັດການພັດທະນາໂລຊິດຕິກ (LPI)**

| ປະເທດ | ລຳດັບ LPI | ຄະແນນ LPI | ອາກອນ | ພື້ນຖານໂຄງລາງ | ການຂົນສົ່ງລະຫວ່າງປະເທດ | ຄວາມສາມາດດ້ານການຂົນສົ່ງ | ລະບົບການຕິດຕາມການຂົນສົ່ງ | ເວລາ |
|---|---|---|---|---|---|---|---|---|
| ສິງກະໂປ | 7 | 4 | 3.89 | 4.06 | 3.58 | 4.1 | 4.08 | 4.32 |
| ໄທ | 32 | 3.41 | 3.14 | 3.14 | 3.46 | 3.41 | 3.47 | 3.81 |
| ຫວຽດນາມ | 39 | 3.27 | 2.95 | 3.01 | 3.16 | 3.4 | 3.45 | 3.67 |
| ມາເລເຊຍ | 41 | 3.22 | 2.9 | 3.15 | 3.35 | 3.3 | 3.15 | 3.46 |
| ອິນໂດເນເຊຍ | 46 | 3.15 | 2.67 | 2.89 | 3.23 | 3.1 | 3.3 | 3.67 |
| ຟີລິບປິນ | 60 | 2.9 | 2.53 | 2.73 | 3.29 | 2.78 | 3.06 | 2.98 |
| ບຣູໄນ | 80 | 2.71 | 2.62 | 2.46 | 2.51 | 2.71 | 2.75 | 3.17 |
| ລາວ | 82 | 2.7 | 2.61 | 2.44 | 2.72 | 2.65 | 2.91 | 2.84 |
| ກຳປູເຈຍ | 98 | 2.58 | 2.37 | 2.14 | 2.79 | 2.41 | 2.52 | 3.16 |
| ມຽນມາ | 137 | 2.3 | 2.17 | 1.99 | 2.2 | 2.28 | 2.2 | 2.91 |

ແຫຼ່ງຂໍ້ມູນ: World Bank, 2021.

ITU: International Telecommunication Union, 160 ປະເທດ (2018)

## 2.2. ການປົກປ້ອງຂໍ້ມູນ

ຮອດປັດຈຸບັນ ສປປ ລາວ ມີນິຕິກຳທີ່ກ່ຽວຂ້ອງກັບການປົກປ້ອງຂໍ້ມູນພາຍໃນປະເທດ ທີ່ໄດ້ຖືກຮອງຮັບແລ້ວເຊັ່ນ: ກົດໝາຍວ່າດ້ວຍອາຊະຍາກຳທາງອິນເຕີເນັດ, ກົດໝາຍວ່າດ້ວຍລາຍເຊັນເອເລັກໂຕຣນິກ; ກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ, ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ; ກົດໝາຍວ່າດ້ວຍເຕັກໂນໂລຊີຂໍ້ມູນຂ່າວສານແລະການສື່ສານ. ກົດໝາຍເຫຼົ່ານີ້ແມ່ນເປັນ ເຄື່ອງມືພື້ນຖານສຳລັບການຄຸ້ມຄອງຂໍ້ມູນດິຈິຕອນ ທີ່ປົ່ນອ້ອມການຄ້າເອເລັກໂຕຣນິກ ເພື່ອຮັບປະກັນຄວາມເຊື່ອໝັ້ນ ລະຫວ່າງຜູ້ຊື້ ແລະຜູ້ຂາຍ, ສ້າງສະພາບແວດລ້ອມທີ່ດີໃຫ້ ແກ່ທຸລະກິດ ແລະ ຄວາມເປັນທຳ.

ເພື່ອເຮັດໃຫ້ການປົກປ້ອງຂໍ້ມູນລະ ຫວ່າງ ຜູ້ເຮັດທຸລະກຳການຄ້າເອເລັກໂຕຣນິກ ຕ່າງໆມີປະສິດທິຜົນນັ້ນ ການສ້າງຄວາມເຂົ້າໃຈ ແລະ ຮັບຮູ້ໃຫ້ແກ່ສັງຄົມກ່ຽວກັບລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບການປົກປ້ອງຂໍ້ມູນ ແມ່ນມີຄວາມສຳຄັນຫຼາຍ ໂດຍຜ່ານການຈັດຕັ້ງໃນຮູບແບບການເຜີຍແຜ່ຂໍ້ມູນດ້ານນິຕິກຳ, ການຝຶກອົບຮົມ, ຈັດຕັ້ງເວທີການປຶກສາຫາລືລະຫວ່າງພາກທຸລະກິດ ແລະ ພາກລັດຖະບານ.

ຕົວຢ່າງຂອງການນຳໃຊ້ເຄື່ອງມືເອເລັກໂຕຣນິກທີ່ກຳລັງໄດ້ຮັບການສະໜັບສະໜູນໃນປັດຈຸບັນ ມີການລະບາດຂອງພະຍາດໂຄວິດ-19 ແມ່ນການໃຊ້ລາຍເຊັນເອເລັກໂຕຣນິກສາມາດປະຢັດເວລາ, ຄ່າໃຊ້ຈ່າຍ, ຂັ້ນຕອນ ແລະ ປະຕິບັດການເວັ້ນໄລຍະຫ່າງທາງສັງຄົມ, ແຕ່ກໍ່ຍັງມີຄວາມກັງວົນກ່ຽວກັບຂໍ້ມູນ ແລະ ລະບົບຮັບປະກັນທາງດ້ານການກວດກາ ແລະ ຄວາມໜ້າເຊື່ອຖືທີ່ຊັດເຈນ. ອີງຕາມຂໍ້ມູນຂອງ Chen (2020), ຄວາມປອດໄພທາງໄຊເບີ ແລະ ລະດັບການໃຫ້ ຄຳໝັ້ນດ້ານສັນຍາຂອງລາວ ແມ່ນຍັງຕໍ່າໃນອາຊຽນ ດີກວ່າພຽງແຕ່ປະເທດກຳປູເຈຍ ແລະ ມຽນມາ (ຕາຕະລາງ 3). ຈາກຂໍ້ມູນສະແດງໃນຕາຕະລາງ 3 ຊີ້ໃຫ້ເຫັນວ່າການການປົກປ້ອງຂໍ້ມູນທາງເອເລັກໂຕຣນິກໃນລາວໂດຍບໍ່ໃຫ້ຖືກລັກ ຫຼື ເຂົ້າລະບົບຖານຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ (Hack) ຈາກກຸ່ມອາຊະຍາກຳທາງໄຊເບີແມ່ນມີຄວາມຈຳເປັນທີ່ຈະຕ້ອງເອົາໃຈໃສ່ເພີ່ມຂຶ້ນ ແລະ ຮັບປະກັນມີປະສິດທິພາບເພື່ອສ້າງຄວາມເຊື່ອໝັ້ນ ໃຫ້ແກ່ການເຮັດທຸລະກຳ ທາງດ້ານທຸລະກິດ

ໂດຍສະເພາະແມ່ນ ເພື່ອສົ່ງເສີມໃຫ້ການຄ້າເອເລັກໂຕຣນິກໃຫ້ພັດທະນາ ແລະ ຂະຫຍາຍຕົວຕາມທິດລວມຂອງການຄ້າສາກົນ.

**ຕາຕະລາງ 3: ຄວາມປອດໄພທາງໄຊເບີ ໃນອາຊຽນ (ASEAN)**

| ປະເທດ | ຈັດລໍາດັບຄວາມປອດໄພທາງໄຊເບີສາກົນ (175) | ລະດັບການໃຫ້ຄໍາໝັ້ນສັນຍາ |
|---|---|---|
| **ບຣູໄນ** | 64 | ກາງ |
| **ກໍາປູເຈຍ** | 131 | ຕໍ່າ |
| **ອິນໂດເນເຊຍ** | 41 | ສູງ |
| **ລາວ** | 120 | ຕໍ່າ |
| **ມາເລເຊຍ** | 8 | ສູງ |
| **ມຽນມາ** | 128 | ຕໍ່າ |
| **ຟີລິບປິນ** | 58 | ກາງ |
| **ສິງກະໂປ** | 6 | ສູງ |
| **ໄທ** | 35 | ສູງ |
| **ຫວຽດນາມ** | 50 | ສູງ |

ແຫຼ່ງຂໍ້ມູນ: ໄດ້ໝູນໃຊ້ຂໍ້ມູນຈາກ Chen (2020)

### 2.3. ການຊໍາລະເງິນທາງເອເລັກໂຕຣນິກ (E-payment)

ໃນປັດຈຸບັນ ຢູ່ ສປປ ລາວ ລະບົບນິເວດຂອງການຈ່າຍເງິນທາງເອເລັກໂຕຣນິກ (EDP) ໃນເບື້ອງການສະໜອງ (ສະຖາບັນການເງິນ-ການທະນາຄານ) ແມ່ນໂດດເດັ່ນ ແລະ ຖືກພັດທະນາໄວ. ໃນທາງກົງກັນຂ້າມ ເບື້ອງຜູ້ຊົມໃຊ້ ເຊັ່ນ: ຜູ້ປະກອບການ ແລະ ຜູ້ບໍລິໂພກສິນຄ້າ ແລະ ບໍລິການ ຍັງນໍາໃຊ້ລະບົບການຊໍາລະແບບເກົ່າ (ຈ່າຍເງິນສົດ) ແລະ ຍັງຂາດພື້ນຖານໂຄງລ່າງທີ່ສະໜັບສະໜູນ. ເພາະການພັດທະນາລະບົບການຈ່າຍເງິນຜ່ານລະບົບ Online ແມ່ນຢູ່ໃນຈັງຫວະການຂະຫຍາຍຕົວຊ້າເມື່ອທຽບກັບສະພາບການຄ້າຂາຍຜ່ານລະບົບ Online ໃນປັດຈຸບັນ. ໃນທ້າຍປີ 2019, ທະນາຄານແຫ່ງ ສປປ ລາວ , ໄດ້ເປີດໂຕການຮ່ວມທຸລະກິດໃໝ່ທີ່ມີຊື່ວ່າ Lao National Payment Network Co Ltd (LAPNet) ໂດຍຮ່ວມມືກັບ 7 ທະນາຄານ ເພື່ອພັດທະນາພື້ນຖານໂຄງລ່າງການຊໍາລະສໍາລັບການເຮັດທຸລະກໍາລະຫວ່າງທະນາຄານ ໂດຍຜ່ານຫລາຍຊ່ອງທາງເຊັ່ນ: QR Code ແລະ ໃນຮູບແບບຂອງການໂອນເງິນຜ່ານໂທລະສັບຈາກທະນາຄານໜຶ່ງໄປທະນາຄານອື່ນ ເພື່ອສ້າງຄວາມສະດວກ, ວ່ອງໄວ ແລະ ປອດໄພຖ້າທຽບກັບການຈ່າຍເງິນສົດ. ນີ້ແມ່ນຄວາມພະຍາຍາມຂອງພາກລັດ ເພື່ອອໍານວຍຄວາມສະດວກໃຫ້ແກ່ການເຮັດທຸລະກິດງ່າຍດາຍ.

ຢ່າງໃດກໍດີ ຍັງສັງເກດເຫັນວ່າການຈ່າຍເງິນລ່ວງໜ້າບໍ່ຄ່ອຍຈະເກີດຂຶ້ນ, ແບບ (Platform) ການຄ້າທາງອີເລັກໂຕຣນິກໃນລາວສ່ວນໃຫຍ່ແມ່ນເຮັດໜ້າທີ່ໃຫ້ຂໍ້ມູນກ່ຽວກັບຜະລິດຕະພັນ ຫຼື ການບໍລິການ , ການໂຄສະນາ ແລະ ວິທີການຈັດສົ່ງ. ຮູບແບບການຈ່າຍເງິນແບບເອເລັກໂຕຣນິກສາມາດຈ່າຍຜ່ານທາງເລືອກບັດເຄຣດິດ/ບັດວີຊາແມ່ນຍັງມີຈໍາກັດ. ຜົນການຄົ້ນຄວ້າສະແດງໃຫ້ເຫັນວ່າ ຄວາມຮັບຮູ້ຂອງທຸລະກິດກ່ຽວກັບການນໍາໃຊ້ການຈ່າຍເງິນດິຈິຕອນແມ່ນຍັງບໍ່ຫຼາຍ. ນອກນັ້ນ, ຄ່າທໍານຽມ ແລະ ຄ່າບໍລິການແມ່ນສູງຖ້າທຽບໃສ່ບາງປະເທດໃນພາກພື້ນ (Chen, 2020). ການເຮັດທຸລະກໍາລະຫວ່າງບັນດາທະນາຄານ ຫຼື ສະຖາບັນການເງິນຍັງບໍ່ມີຄວາມຫຼາກຫຼາຍ. ຮູບແບບການຊໍາລະທີ່ມີຄວາມປອດໄພທີ່ສູງ ຍັງບໍ່ໄດ້ຖືກນໍາໃຊ້ຢ່າງກວ້າງຂວາງເຊັ່ນ: ບັດເຄຣດິດ, ບັດເດບິດ ແລະ ອື່ນໆ. ອີງຕາມຖານຂໍ້ມູນຂອງທະນາຄານໂລກ (2020) ຍັງສະແດງໃຫ້ເຫັນວ່າມີພຽງ 1% ແລະ 13% ຂອງປະຊາກອນລາວທີ່ມີອາຍຸ 15 ຂຶ້ນໄປ ມີບັດເຄຣດິດ ແລະ ບັດເດບິດ ເປັນຂອງຕົນເອງຕາມລໍາດັບ. ໝາຍຄວາມວ່າສັງຄົມຍັງນິຍົມໃຊ້ວິທີການຊໍາລະເງິນແມ່ນໃຊ້ເງິນສົດ ຫຼື ເຮັດທຸລະກໍາແບບງ່າຍດາຍຜ່ານໂທລະສັບມືຖື ແລະ ຕູ້ ATM.

### 2.4. ດ້ານລະບຽບການ

ລະບຽບການສະໜັບສະໜູນບາງອັນຍັງໃໝ່ ແລະ ຍັງບໍ່ສາມາດເວົ້າໄດ້ວ່າບັນດາຫົວໜ່ວຍທຸລະກິດຈະເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນ; ໂດຍສະເພາະແມ່ນດໍາລັດວ່າດ້ວຍການຄ້າເອເລັກໂຕຣນິກ ທີ່ໄດ້ປະກາດໃຊ້ໃນ ປີ 2021 ແລະ ນິຕິກໍາອື່ນໆ ທີ່ປົ່ນອ້ອມ ດັ່ງໄດ້ກ່າວມາຂ້າງເທິງ. ນອກຈາກນັ້ນ ຍັງສັງເກດເຫັນວ່າມີບາງນິຕິກໍາທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ສົ່ງເສີມການຄ້າເອເລັກໂຕຣນິກຂອງລາວ ໄດ້ພັດທະນາຊ້າກວ່າປະເທດໃນອາຊຽນໃໝ່ເຊັ່ນ:

**ຕາຕະລາງ 4: ການປຽບທຽບບັນດານິຕິກໍາທີ່ກ່ຽວຂ້ອງກັບການຄ້າເອເລັກໂຕຣນິກ**

| ລ.ດ | ນິຕິກໍາ | ປີປະກາດໃຊ້ | | | | ໝາຍເຫດ |
|---|---|---|---|---|---|---|
| | | ລາວ | ຫວຽດນາມ | ກໍາປູເຈຍ | ມຽນມາ | |
| 1 | ການຄ້າເອເລັກໂຕຣນິກ | 2021 | 2006, 2013 | 2019 | ຮ່າງ(law) | ສປປ ລາວ ແລະ ສສ ຫວຽດ ນາມ (ດໍາລັດ) |
| 2 | ການປົກປ້ອງຜູ້ຊົມໃຊ້ | 2010 | 2010 | 2019 | 2019 | ກົດໝາຍ |
| 3 | ທຸລະກໍາທາງເອເລັກໂຕຣນິກ | 2012 | 2005 | - | 2014 | ກົດໝາຍ |
| 4 | ການຕ້ານ ແລະສະກັດກັ້ນອາຊະຍາກໍາທາງຄອມພິວເຕີ້ | 2015 | 2015,2018 | ຮ່າງ(law) | ຮ່າງ(law) | Cambodia last updated Nov, 2020 |
| 5 | ການແຂ່ງຂັນທາງທຸລະກິດ | 2015 | 2004/2018 | 2019 | 2015 | ກົດໝາຍ |
| 6 | ການປົກປ້ອງຂໍ້ມູນທາງເອເລັກໂຕຣນິກ | 2017 | 2015 | - | 2017 | Network Information Security Law (Vietnam) |
| 7 | ລາຍເຊັນເອເລັກໂຕຣນິກ | 2019 | 2005 | 2017 | - | Cambodia (decree) |
| 8 | ເຕັກໂນໂລຊີ, ການສືສານ ແລະ ຂໍ້ມູນຂ່າວສານ | 2016 | 2006, 2009 | - | 2013 | ກົດໝາຍ |

ໝາຍເຫດ: ຂໍ້ມູນໃນຕາຕະລາງ 4 ສັງລວມຈາກຫຼາຍແຫຼ່ງ ຂໍ້ມູນທີ່ວາງແມ່ນ ບໍ່ສາມາດຊອກໄດ້ໃນຂະນະນີ້.

ດຳລັດວ່າດ້ວຍການຄ້າເອເລັກໂຕຣນິກ ແລະ ກົດໝາຍວ່າທຸລະກຳທາງເອເລັກໂຕຣນິກ, ເຕັກໂນໂລຊີ, ການສຶກສາ ແລະ ຂໍ້ມູນຂ່າວສານ, ລາຍເຊັນທາງເອເລັກໂຕຣນິກ, ການປົກປ້ອງຂໍ້ມູນທາງເອເລັກໂຕຣນິກ (ຕາຕະລາງ 4). ໃນຂະນະດຽວກັນຫຼາຍປະເທດອາຊຽນເກົ່າ ແມ່ນໄດ້ສຳເລັດການຍົກລະ ດັບຈາກດຳລັດເປັນ ກົດໝາຍວ່າດ້ວຍການຄ້າເອເລັກໂຕຣນິກ ລວມມີ: ສິງກະໂປ, ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ ແລະ ໄທ (Chen & Kimura, 2020). ການສຶກສາຄັ້ງນີ້ຍັງຊີ້ໃຫ້ເຫັນວ່າ ນອກຈາກບັນຫາພື້ນຖານໂຄງລ່າງ ແລະ ນິຕິກຳຄຸ້ມຄອງ ແລະ ສົ່ງເສີມຈຳກັດແລ້ວ ບັນຫາດ້ານຊັບພະຍາກອນມະນຸດ ກໍເປັນບັນຫາທີ່ສຳຄັນຕັດສິນເຊັ່ນກັນ. ບຸກຄະລະກອນທີ່ມີຄວາມຮູ້ຄວາມສາມາດນຳໃຊ້ລະບົບດີຈີຕອນທັງຂົງເຂດການຄຸ້ມຄອງມະຫາພາກ ແລະ ໃນຂົງເຂດທຸລະກິດ ແມ່ນຂໍກຸນແຈທີ່ສຳຄັນເພື່ອຮັບປະກັນໃຫ້ປະເທດໄດ້ຮັບຜົນປະໂຫຍດສູງສຸດຈາກການປ່ຽນແປງລະບົບການພົວພັນດ້ານເສດຖະກິດ-ການຄ້າ ໃນຍຸກເສດຖະກິດອຸດສາຫະກຳ 4.0 ທີ່ຍັງດຳເນີນໃນປະຈຸບັນ ເຊິ່ງເຫັນວ່າພວກເຮົາຍັງມີຈຳກັດ (ຈາກຜົນຂອງການສຶກສາ, ອີງຕາມແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 9, ແລະ ແຜນພັດທະນາອຸດສາຫະກຳ ແລະ ການຄ້າ, 2021-2025).

### 3. ຂໍ້ສະເໜີແນະດ້ານວິຊາການ

- ເລັ່ງຈັດຕັ້ງເຜີຍແຜ່ຂະຫຍາຍດຳລັດ ວ່າດ້ວຍ ການຄ້າເອເລັກໂຕຣນິກໃຫ້ກວ້າງຂວາງ ແລະ ທົ່ວເຖິງໃນສັງຄົມ ໂດຍສະເພາະແມ່ນຜູ້ປະກອບການທີ່ກ່ຽວຂ້ອງກັບ ການຄ້າເອເລັກໂຕຣນິກ ໂດຍຜ່ານຫຼາຍຮູບແບບເຊັ່ນ: ການຈັດສຳມະນາເຜີຍແຜ່, ຜ່ານສື່ໂທລະພາບ, ເວັບໄຊ໌, ວິທະຍຸ ແລະ ສື່ອອນລາຍ;
- ປະຊາສຳພັນໃຫ້ບັນດາຜູ້ປະກອບການທີ່ດຳເນີນ ແລະ ກຳລັງຈະດຳເນີນທຸລະກິດທາງດ້ານການຄ້າເອເລັກໂຕຣນິກ ຕ້ອງຫັນເຂົ້າສູ່ລະບົບຕາມລະບຽບການ ເພື່ອຮັບປະກັນການຄ້າທີ່ເປັນທຳ ແລະ ການປະກອບພັນທະໃຫ້ແກ່ພາກລັດໄດ້ຢ່າງມີປະສິດທິພາບ;
- ເອົາໃຈໃສ່ໃນການສ້າງນິຕິກຳທີ່ກ່ຽວຂ້ອງໂດຍສະເພາະແມ່ນເງື່ອນໄຂ ແລະ ຮູບແບບການເກັບອາກອນຈາກກິດຈະກຳທາງດ້ານການຄ້າເອເລັກໂຕຣນິກ;
- ສົ່ງເສີມ ແລະ ພັດທະນາພື້ນຖານໂຄງລ່າງທາງທຸລະກິດ ທີ່ສະໜັບສະໜູນການຄ້າເອເລັກໂຕຣນິກ ໃຫ້ສົມຄູ່ກັບຈັງຫວະການຂະຫຍາຍຕົວຂອງທຸລະກິດໂດຍສະເພາະແມ່ນລະບົບອິນເຕີເນັດ; ລະບົບໂລຊິດຕິກ; ລະບົບການຂົນສົ່ງ-ປະກັນໄພ; ລະບົບການຊຳລະເງິນທາງເອເລັກໂຕຣນິກໃຫ້ທັນສະໄໝ;
- ພັດທະນາຊັບພະຍາກອນມະນຸດ ເພື່ອຮັບປະກັນໃຫ້ມີແຮງງານໃນຂະແໜງການດັ່ງກ່າວໃຫ້ພຽງພໍ, ໂດຍສະເພາະແມ່ນໄອທີໃຫ້ຫຼາຍຂຶ້ນ ທັງພາກລັດ ແລະ ພາກທຸລະກິດ;
- ການກຽມຄວາມພ້ອມຂອງໜ່ວຍງານປົກປ້ອງຜູ້ບໍລິໂພກ ແລະ ຕິດຕາມກວດກາ ການແຂ່ງຂັນທາງດ້ານການຄ້າທີ່ເປັນທຳ ເພື່ອຊ່ວຍໄກ່ເກ່ຍ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງກັບການຄ້າເອເລັກໂຕຣນິກເຊັ່ນ: ການໂຄສະນາເກີນຈິງ, ການໄດ້ຮັບສິນຄ້າ ແລະ ບໍລິການທີ່ບໍ່ຖືກຕ້ອງ, ການຊຳລະສິນຄ້າ ແລະ ບໍລິການທີ່ມີຄວາມສ່ຽງ, ການໄດ້ຮັບສິນຄ້າທີ່ລ່າຊ້າ ແລະ ອື່ນໆ;
- ພັດທະນາລະບຽບການໃຫ້ສອດຄ່ອງ, ມີຄວາມກົມກຽວກັບລະບຽບການທາງດ້ານການຄ້າເອເລັກໂຕຣນິກ ຂອງສາກົນ ແລະທັນກັບກຳນົດເວລາທີ່ໄດ້ໃຫ້ສັດຕະຍາບັນໄວ້ໂດຍສະເພາະແມ່ນ ແຜນຈັດຕັ້ງປະຕິບັດການຄ້າເອເລັກໂຕຣນິກອາຊຽນ ແລະ ອາຊຽນ-ຄູ່ຮ່ວມ;
- ອຳນວຍຄວາມສະດວກທາງດ້ານການຄ້າຜ່ານແດນ ຈາກກິດຈະກຳທາງການຄ້າເອເລັກໂຕຣນິກ ລະຫວ່າງປະເທດທີ່ນັບມື້ນັບເພີ່ມຂຶ້ນ ພ້ອມທັງຮັບປະກັນຄວາມປອດໄພທີ່ມີລະບົບກວດສອບສິນຄ້າເຂົ້າອອກທີ່ທັນສະໄໝ.

ເຖິງຢ່າງໃດກໍ່ຕາມ, ບົດສຶກສານີ້ຍັງມີຂໍ້ຈຳກັດຫຼາຍດ້ານເຊັ່ນ: ເວລາ, ງົບປະມານ ແລະ ຂໍ້ມູນຂອງກຸ່ມຕົວຢ່າງ. ເພື່ອສ່ອງແສງໃຫ້ເຫັນລະດັບການພັດທະນາການຄ້າເລັກໂຕຣນິກ ຢູ່ ສປປ ລາວ ໃຫ້ໄດ້ໃນຫຼາຍມິຕິ ບັນຫາທີ່ກ່າວມານັ້ນຄວນໄດ້ຮັບການສະໜັບສະໜູນ ພ້ອມທັງມີການສຶກສາຄົ້ນຄວ້າໃໝ່ ໃນແງ່ມູມຂອງຜູ້ຊື້ສິນຄ້າ ແລະ ການບໍລິການ ຜ່ານທາງອອນລາຍ ເຊິ່ງເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ ທີ່ຈະຕ້ອງເອົາໃຈໃສ່ຄົ້ນຄວ້າ ແລະສະເໜີແນະແນວທາງດ້ານນະໂຍບາຍໃນຕໍ່ໜ້າເຊັ່ນດຽວກັນ.

### ເອກະສານອ້າງອີງ


ASEAN (Association of Southeast Asian Nations). (2016), Master Plan on ASEAN Connectivity 2025. Jakarta: ASEAN.

ASEAN. (2021). ASEAN Work Programme on Electronic Commerce 2017-2025. Retrieved from https://asean.org/asean-economic-community/sectoral-bodies-under-the-purview-of-aem/e-commerce/

Chen, L. (2020). Improving Digital Connectivity for E-commerce: A Policy Framework and Empirical Note for ASEAN. ERIA Discussion Paper Series (No. 327). Economic Research Institute for ASEAN and East Asia (ERIA).

Chen, L., & Kimura, F. (2020). E-commerce Connectivity in ASEAN. Jakarta, Indonesia: Economic Research Institute for ASEAN and East Asia (ERIA).

DIP (Department of Industry and Commerce). (2021). Drafting of Industry and Handcraft Development Plan 2021-2025. Ministry of Industry and Commerce.

ERIA. (2012). Study on MSMEs Participation in the Digital Economy in ASEAN Nurturing ASEAN MSMEs to Embrace Digital Adoption. Jakarta: Economic Research Institute for ASEAN and East Asia (ERIA).

MPI (Ministry of Planning and Investment). (2021). *Nineth National Socio-Economic Development Plan, 2021-2025.* Vientiane Capital, Dated July 2021.

NA (National Assembly). (2011). Law on Telecommunications. Vientiane Capital, Lao PDR: NO. 09/NA, Dated 21 December 2011.

NA. (2014). Law on Electronic Transactions. Vientiane Capital, Lao PDR: No 20/NA, Dated 7 December 2012.

NA. (2015). *Law on Competition*. Vientiane Capital, Lao PDR: NO. 60/N.A, dated 14 July 2015.

NA. (2015). *Law on the Prevention of Cybercrime*. Vientiane Capital, Lao PDR: NO. 02/N.A, dated 07 November 2016.

NA. (2016). *Law on Information and Communication Technology*. Vientiane Capital, Lao PDR: NO: 02/N.A, dated 07 November 2016.

NA. (2017). *Law on Secured Transaction*. Vientiane Capital, Lao PDR: NO. 25/N.A, dated 12 May 2017.

PM (Prime Minster). (2021). Decree on E-commerce. Vientiane Capital, Lao PDR: No. 296/GOL, Dated: 12 April 2021.

World Bank. (2020). *World Development Indicator*. https://databank.worldbank.org/data